ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----====000====-----

ກຳມະບານຮາກຖານ ທຫລ

ໜ່ວຍກຳມະບານ ສຄຄຊ ເລກທີ 162 /ໜກບ.ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 06 ກໍລະກົດ 2018

**ເຖິງ:** ຄະນະໜ່ວຍກຳມະບານ ສຄຄຊ ພ້ອມດ້ວຍສະມາຊິກທຸກສະຫາຍ ທີ່ຮັກແພງ;

**ເລື່ອງ:** ຈັດຕັ້ງການປະເມີນ ຕາມເນື້ອໃນ 5 ເປັນເຈົ້າ ປະຈຳປີ 2017.

- ອີງຕາມແຈ້ງການຂອງກຳມະບານຮາກຖານ ທຫລ ສະບັບເລກທີ 57/ກບຮຖ.ທຫລ ລົງວັນທີ 13 ມິຖຸນາ 2018;

ໜ່ວຍກຳມະບານ ສຄຄຊ ຂໍຖືເປັນກຽດແຈ້ງມາຍັງບັນດາສະຫາຍ ຊາບວ່າ: ກຳມະບານຮາກຖານ ທຫລ ໄດ້ແຈ້ງ ໃຫ້ບັນດາໜ່ວຍກຳມະບານ ທີ່ຂຶ້ນກັບກຳມະບານຮາກຖານ ທຫລ ຈັດຕັ້ງການປະເມີນຕົນເອງ, ປະເມີນຄະນະໜ່ວຍກຳມະບານ ພ້ອມດ້ວຍສະມາຊິກແຕ່ລະສະຫາຍ ພາຍໃນໜ່ວຍກຳມະບານຕົນເອງ ໂດຍອີງໃສ່ເນື້ອໃນ 5 ເປັນເຈົ້າ ຂອງສະຫະພັນກຳມະບານລາວ ປະຈາປີ 2017 ແລ້ວນຳສົ່ງຜົນການປະເມີນ ໃຫ້ກຳມະບານຮາກຖານ ທຫລ ພາຍໃນວັນທີ 20 ກໍລະກົດ 2018. ສະນັ້ນ, ໜ່ວຍກຳມະບານ ສຄຄຊ ຈຶ່ງຂໍແຈ້ງມາຍັງບັນດາສະຫາຍ ຄະນະໜ່ວຍກຳມະບານ ສຄຄຊ ພ້ອມດ້ວຍສະມາຊິກ ທຸກສະຫາຍ ກະກຽມການປະເມີນ ປະຈຳປີ 2017 ຕາມແບບຟອມ (**ເອກະສານຄັດຕິດ 1**) ແລະ (**ເອກະສານຄັດຕິດ 2**) ແລະ ເຂົ້າຮ່ວມການປະເມີນ **ໃນວັນທີ 11 ກໍລະກົດ 2018 ເວລາ 8:30-16:00 ໂມງ ທີ່ຫ້ອງປະຊຸມ ສຄຄຊ.**

ສຳລັບວິທີປະເມີນ ແມ່ນຈະດຳເນີນ ເປັນ 2 ຮູບແບບ ຄື: ຮູບແບບປິດລັບ ແລະ ຮູບແບບເປີດເຜີຍ.

- **ຮູບແບບປິດລັບ:** ແມ່ນສະມາຊິກກຳມະບານໃຫ້ຄະແນນແຕ່ລະສະຫາຍ ຄະນະໜ່ວຍ ແລະ ສະມາຊິກຜູ້ອື່ນ ແບບປິດລັບ ຕາມເອກະສານຄັດຕິດ 2 ແລ້ວສົ່ງໃຫ້ໜ່ວຍກຳມະບານເກັບກຳ ພາຍຫຼັງມື້ປະເມີນຕົວຈິງ 1 ວັນ.
- **ຮູບແບບເປີດເຜີຍ:** ແມ່ນສະມາຊິກປະເມີນ ແລະ ໃຫ້ຄະແນນຕົນເອງໃນມື້ປະເມີນຕົວຈິງ (ວັນທີ 11 ກໍລະກົດ 2018) ຕາມເອກະສານຄັດຕິດ 1 ແລະ ໃຫ້ສະມາຊິກຜູ້ອື່ນປະກອບຄຳເຫັນດ້ານດີ ແລະ ດ້ານອ່ອນຂໍ້ຄົງຄ້າງຂອງຕົນ.

- **ໝາຍເຫດ:** ບ່ອນອີງໃນການປະເມີນ ນອກຈາກອີງໃສ່ເນື້ອໃນ 5 ເປັນເຈົ້າແລ້ວ, ໃຫ້ອີງໃສ່ສະຖິຕິການປະກອບສ່ວນເຂົ້າຮ່ວມຂະບວນການວຽກງານຂອງໜ່ວຍກຳມະບານ ສຄຄຊ ນຳຕື່ມ ເພື່ອໃຫ້ການປະເມີນມີຄວາມຍຸຕິທຳ ແລະ ຊຸກຍູ້ສົ່ງເສີມຜູ້ປະກອບສ່ວນ ໃນວຽກງານຂອງໜ່ວຍກຳມະບານ ສຄຄຊ.

ເນື້ອໃນລາຍລະອຽດ ກ່ຽວກັບການປະເມີນ ແລະ ການໃຫ້ຄະແນນ, ເອກະສານຄັດຕິດ 1 ແລະ 2 ສາມາດດາວໂຫຼດເອກະສານ ໃນກະດານຂ່າວ ໃນເວັບໄຊ ສຄຄຊ ຊຶ່ງປະກອບມີເອກະສານເພີ່ມຕື່ມດັ່ງນີ້:

1) ແຈ້ງການເພີ່ມເຕີມ ສະບັບເລກທີ 61/ກບຮຖ. ທຫລ, ລົງວັນທີ 22 ມິຖຸນາ 2018;
2) ບົດນະນຳ ເລກທີ 1750/ສກລ.ລົງວັນທີ 27/07/2016;

3) ສະຖິຕິການປະກອບສ່ວນວຽກງານຂະບວນການ ຂອງໜ່ວຍກຳມະບານ ສຄຄຊ ໃນປີ 2017.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາສະຫາຍ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າໜ່ວຍກຳມະບານ ສຄຄຊ**

ບຸນຈິງ ກອງຄຳ